# ກົມປ່າໄມ້ ຮັບຮອງບົດວິພາກເສດຖະກິດເຕັກນິກການປູກໄມ້ແບບມີສ່ວນຮ່ວມ ເນື້ອທີ່ 60 ພັນເຮັກຕາ ຂອງບໍລິສັດບົວລະພາ

By **ayib** - August 10, 2020



ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ເຫັນດີຮັບຮອງບົດວິພາກເສດຖະກິດ – ເຕັກນິກໂຄງການລົງທຶນປູກໄມ້ ແລະ ຟື້ນຟູປ່າແບບມີສ່ວນຮ່ວມລະຫວ່າງລັດ – ຜູ້ປະກອບການ, ປະຊາຊົນໃນປ່າຜະລິດແຫ່ງຊາດ ເນື້ອທີ່ 60 ພັນເຮັກຕາ.

ອີງຕາມໃບຢັ້ງຢືນການຮັບຮອງເອົາບົດວິພາກເສດຖະ ກິດ – ເຕັກນິກຂອງກົມປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 2912/ກປມ ລົງວັນທີ 12 ມິຖຸນາ 2020.
ກົມປ່າໄມ້ຕົກລົງ ດັ່ງນີ້:

1 ເຫັນດີຮັບຮອງເອົາ ແລະ ຢັ້ງຢືນວ່າ: ບົດວິພາກ ເສດຖະກິດ – ເຕັກນິກ ສະບັບລົງວັນທີ 12 ມິຖຸນາ 2020 ສຳລັບໂຄງການລົງທຶນປູກໄມ້ ແລະ ຟື້ນຟູປ່າແບບມີສ່ວນຮ່ວມ ລະຫວ່າງ ລັດ – ຜູ້ປະກອບການ – ປະຊາຊົນໃນເນື້ອທີ່ທັງໝົດ 60 ພັນ ເຮັກຕາ ຢູ່ໃນເຂດປ່າຜະລິດ 3 ແຫ່ງນອນຢູ່ໃນ 2 ແຂວງ ຄື: (1) ແຂວງວຽງຈັນ ແລະ ( 2 ) ແຂວງໄຊຍະບູລີ ຂອງບໍລິສັດ ບົວລະພາ ກະສິ ກຳ – ປ່າໄມ້ ຈຳກັດ, ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບແນວທາງນະໂຍບາຍ ແລະ ກົດໝາຍຂອງລັດຖະບານ, ມີການກຳນົດຫຼັກການ, ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດທີ່ຖືກຕ້ອງ ແລະ ເໝາະສົມ, ພ້ອມທັງມີຄວາມເປັນໄປໄດ້ສູງໃນການສະໜອງຜົນປະໂຫຍດທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມໃຫ້ແກ່ລັດຖະບານ, ປະຊາຊົນບັນດາເຜົ່າ ແລະ ຜູ້ລົງທຶນ ໄດ້ຢ່າງກຸ້ມຄ່າ ແລະ ທົ່ວເຖິງ ເຊິ່ງລາຍລະອຽດຂອງຜົນການວິພາກເສດຖະ ກິດ – ເຕັກນິກ ໄດ້ສັງລວມໄວ້ຢູ່ດ້ານຫຼັງຂອງໃບຢັ້ງຢືນສະບັບນີ້.

2 ຕິດພັນກັບໃບຢັ້ງຢືນສະບັບນີ້, ຜູ້ລົງທຶນ/ບໍລິສັດ ຕ້ອງປະຕິບັດຢ່າງເຂັ້ມງວດບັນດາຫຼັກການ, ມາດຕະການ ແລະ ວິທີການຕ່າງໆດັ່ງທີ່ໄດ້ກຳນົດໄວ້ຢູ່ໃນບົດວິພາກເສດຖະກິດ – ເຕັກນິກ ສະບັບທີ່ຖືກຮັບຮອງນີ້ ໂດຍສະເພາະບັນດາຫຼັກການລວມ, ມາດຕະການ ແລະ ວິທີການດ້ານເຕັກນິກ ແລະ ການມີສ່ວນຮ່ວມຂອງອົງການປົກຄອງ ແລະ ປະຊາຊົນທ້ອງຖິ່ນ.

3 ໃບຢັ້ງຢືນສະບັບນີ້ມີຜົນບັງຄັບໃຊ້ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ໃນກໍລະນີ ຜູ້ລົງທຶນ/ບໍລິສັດ ຫາກບໍ່ປະຕິບັດຕາມບັນດາຫຼັກການ, ມາດຕະການ ແລະ ວິທີການຕ່າງໆ ດັ່ງທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ – ເຕັກນິກທີ່ກ່ຽວຂ້ອງ, ໃບຢັ້ງຢືນສະບັບນີ້ຈະໝົດຄຸນຄ່າການບັງຄັບໃຊ້ ແລະ ຈະຖືກຍົກເລີກການນຳໃຊ້ໄປໃນຕົວ.

ສຳລັບການປູກໄມ້ໃນເນື້ອທີ່ 60 ພັນເຮັກຕາ ຂອງບໍລິສັດບົວລະພາກະສິກຳ ຈຳກັດ ໃນໄລຍະສຳປະທານ 50 ປີ ໃຊ້ງົບປະມານ 670.648.486 ໂດລາ ສະຫະລັດ ຈາກການລົງທຶນຄາດວ່າບໍລິສັດຈະສາມາດ ສ້າງລາຍຮັບໄດ້ທັງໝົດ 2.057.608.000 ໂດລາ ແລະ ຄາດວ່າຈະສາມາດສ້າງຜົນແຕກຕ່າງໄດ້ 1.386.959.514 ໂດລາ ຄາດວ່າຈະສາມາດສ້າງວຽກເຮັດງານທຳ 8.501 ຄົນ.

EDITOR PICKS

ແຈ້ງການ ເລື່ອງນ້ຳມັນຕ້ອງມາຕາມແຜນ ວັນຈັນນີ້ແນ່ນອນ
June 18, 2022

ລົງນາມແລ້ວ ຈະຂາຍພະລັງງານໄຟຟ້າໃຫ້ສິງກະໂປ
June 17, 2022

Harley Davidson ເປີດໂຕລົດຖີບໄຟຟ້າ ລາຄາ 54 ລ້ານກີບ
June 17, 2022

ຄວາມສົນໃຈ

ແຈ້ງການ ເລື່ອງນ້ຳມັນຕ້ອງມາຕາມແຜນ ວັນຈັນນີ້ແນ່ນອນ
June 18, 2022

ລົງນາມແລ້ວ ຈະຂາຍພະລັງງານໄຟຟ້າໃຫ້ສິງກະໂປ
June 17, 2022